# ເງື່ອນໄຂທົ່ວໄປ ປະກັນສຸຂະພາບ (AS.09)

**1. ຂໍ້ຕົກລົງຂອງການປະກັນໄພ**

ຂໍ້ຕົກລົງຂອງການປະກັນໄພນີ້ ແມ່ນອີງໃສ່ ຂໍ້ມູນເຊິ່ງຜູ້ສະເໜີເອົາປະກັນໄພແຈ້ງຕໍ່ ບປລ ແລະ ອີງໃສ່ຂໍ້ຕອບຄໍາຖາມກ່ຽວກັບສຸຂະພາບ ທີ່ຜູ້ສະເໜີເອົາການປະກັນໄພ ໄດ້ລົງລາຍເຊັນໄວ້ ເພື່ອຈຸດປະສົງການເຮັດປະກັນໄພ. ໃນກໍລະນີຜູ້ສະເໜີເອົາການປະກັນໄພ ຫາກແຈ້ງຂໍ້ມູນບໍ່ຖືກຕ້ອງ ຫຼື ບໍ່ແຈ້ງຂໍ້ມູນຕົວຈິງທີ່ກ່ຽວພັນກັນໃຫ້ ບປລ ຊາບ, ຖ້າວ່າເມື່ອໃດ ບປລ ຮູ້ເຖິງສະພາບຕົວຈິງ ເມື່ອນັ້ນ ບປລ ອາດຈະຕັດສິນໃຈ ເພີ່ມຄ່າທໍານຽມປະກັນໄພ ຫຼື ລົບລ້າງໃບປະກັນໄພ.

**2. ນິຍາມ**

ໃບປະກັນໄພຫລືໃນຂໍ້ຕົກລົງຄຸ້ມກັນທີ່ແນບຕິດໃບປະກັນໄພນີ້:

ບໍລິສັດຫລືຜູ້ປະກັນໄພ: ໝາຍເຖິງບໍລິສັດທີອອກສັນຍາປະກັຍໄພ.

**ຜູ້ສະເໜີ:** ໝາຍເຖິງບຸກຄົນທີ່ສະເໜີເອົາປະກັນໄພ.

**ຜູ້ຮັບການປະກັນໄພ:** ໝາຍເຖິງບຸກຄົນທີ່ມີຊື່ລະບຸໄວ້.

**ເງື່ອນໄຂສະເພາະ:** ໝາຍເຖິງສັນຍາປະກັນໄພ.

**ອຸບັດຕິເຫດ:** ໝາຍເຖິງເຫດການທີ່ເກີດຂຶ້ນກະທັນຫັນໂດຍບໍ່ຄາດຄິດ ຈາກປະໄຈພາຍນອກຮ່າງກາຍ ແລະ ເຮັດໃຫ້ເກີດຜົນ ທີ່ຜູ້ໄດ້ຮັບການປະກັນໄພບໍ່ໄດ້ເຈຕະນາ.

**ການບາດເຈັບ:** ໝາຍເຖິງການບາດເຈັບທາງຮ່າງກາຍ ອາດມີຜົນໂດຍກົງຈາກອຸບັດຕິເຫດເຊິ່ງເກີດຂຶ້ນໂດຍບັງເອີນ ແລະ ປາດສະຈາກເຫດການອື່ນ.

**ການເຈັບປ່ວຍ:** ໝາຍເຖິງການເຈັບປ່ວຍ ຫລື ພະຍາດທີ່ເກີດຂື້ນໂດຍກົງຢ່າງຜິດປົກກະຕິໃນຮ່າງກາຍຜູ້ໄດ້ຮັບການປະກັນໄພຊຶ່ງມີຄວາມຈໍາເປັນຕ້ອງໄດ້ຮັບເຂົ້າການປິ່ນ ປົວໃນໂຮງໝໍ.

**ແພດໝໍ:** ໝາຍເຖິງບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ປິ່ນປົວຕາມຫຼັກການແພດສະໄໝໃໝ່ຢູ່ໃນຂອບເຂດວິຊາຊີບຂອງບຸກຄົນນັ້ນໆແຕ່ບໍ່ ແມ່ນຜູ້ໄດ້ຮັບປະກັນໄພປິ່ນປົວຕົນເອງທາງການແພດ.

ມື້: ໝາຍເຖິງຈໍານວນທີ່ມື້ຜູ້ໄດ້ຮັບການປະກັນໄພທີ່ໄດ້ການປິ່ນປົວໃນໂຮງໝໍ.

**ສັນຍະແພດ:** ໝາຍເຖິງບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ປະຕິບັດການຜ່າຕັດຕາມຫລັກການແພດສະໄໝໃໝ່ໃນຂອບເຂດການປະຕິບັດວິຊາ ຊີບຂອງຜູ້ກ່ຽວ.

**ໂຮງໝໍ ຫລື ໂຮງພະຍາບານ:** ໝາຍເຖິງສະຖາບັນ ທີ່ປະກອບສ້າງຂື້ນ ຖືກຕ້ອງຕາມກົດໝາຍຊຶ່ງທໍາການປິ່ນປົວຄົນເຈັບ24ຊົ່ວໂມງ ຕໍ່ໜຶ່ງວັນ, ມີບັນດາແພດໝໍ ທີ່ມີຄວາມສາມາດ,ປະກອບດ້ວຍອຸປະກອນດ້ວຍອຸປະກອນການແພດ ແລະ ອຸປະກອນຜ່າຕັດຄອບ ອຸປະກອນຜ່າຕັດຄອບຖ້ວນ,

**ຜູ້ປ່ວຍພາຍໃນ:** ໝາຍເຖິງຜູ້ທີ່ຕ້ອງເຂົ້າພັກເພື່ອທໍາການປິ່ນປົວຕາມຄວາມຈໍາເປັນທາງດ້ານການແພດໃນໂຮງໝໍເປັນເວລາຕໍ່ເນື່ອງກັນ **ບໍ່ໜ້ອຍກ່ວາ 6ຊົ່ວໂມງ.**

**ຜູ້ປ່ວຍພາຍນອກ:** ໝາຍເຖິງຜູ້ທີ່ຕ້ອງໄດ້ຮັບກ່ານກວດ ແລະ ປິ່ນປົວຕາມຄວາມຈໍາເປັນທາງກັນແພດໃນພະແນກຜູ້ປ່ວຍນອກ ຫລື ຫ້ອງສຸກເສີນຂອງໂຮງໝໍຕະຫຼອດຈົນເຖິງຜູ້ທີ່ໄດ້ຮັບການຜ່າຕັດນ້ອຍໂດຍບໍ່ມີຂໍ້ບົ່ງຊີ້ທາງການແພດທີ່ຕ້ອງເຂົ້າປິ່ນປົວຢູ່ ໃນໂຮງໝໍໃນຖານະຜູ້ປ່ວຍພາຍໃນຂອງໂຮງໝໍ.

**ບາດເຈັບຫລືເຈັບປ່ວຍແຕ່ລະຄັ້ງ:** ໝາຍເຖິງອຸບັດຕິເຫດ ຫລື ການບາດເຈັບທີ່ເຮັດໃຫ້ຜູ້ໄດ້ຮັບປະກັນໄພຕ້ອງດູແລຕົວເອງຕໍ່ກັນໃນຖານະຄົນເຈັບໃນໂຮງ ໝໍ ຫລື ສະຖານທີ່ພະຍາບານ,ການປິ່ນປົວແຕ່ລະຄັ້ງເປັນໄລຍະໆຕິດຕໍ່ກັນດ້ວຍສາເຫດທີ່ກ່ຽວພັນເນື່ອງຈາກການບາດ ເຈັບປ່ວຍຄັ້ງກ່ອນພາຍໃນ90ວັນຈະຖືວ່າແມ່ນການບາດເຈັບຫລືການເຈັບປ່ວຍຄັ້ງດຽວກັນ.

**ຄລີນິກ:** ໝາຍເຖິງສະຖາບັນທີ່ປະກອບສ້າງຂື້ນຖືກຕ້ອງຕາມກົດໝາຍຊຶ່ງທໍາການປິ່ນປົວຄົນເຈັບບົນພື້ນຖານ,ໂດຍມີບັນດາແພດ ໝໍທີ່ສາມາດ,ປະກອບດ້ວຍອຸປະກອນການແ

**3.ເງື່ອນໄຂກ່ຽວກັບການພິຈາລະນາປະກັນໄພ.**

3.1 ປະກອບໃບສະເໜີເອົາການປະກັນໄພ

3.2 ຄັດຕິດໃບກວດສຸຂະພາບປະຈໍາປີ

3.3 ຜູ້ຂໍເອົາປະກັນໄພຕ້ອງມີອາຍຸ 1 ເດືອນ 1ວັນ-60ປີ.

3.4 ເດັກນ້ອຍອາຍຸ 1 ເດືອນ 1 ວັນ 15ປີ ຕ້ອງເຮັດສັນຍາປະກັນໄພຮ່ວມຜູ້ປົກຄອງ

3.5 ຜູ້ຂໍປະກັນໄພມີອາຍຸ40-60ປີ ຕ້ອງໄດ້ການກວດສຸຂະພາບຕາມທີ່ລະບຸໃນໃບຟອມກວດສຸຂະພາບ

**4. ການຈ່າຍຄ່າທຳນຽມ.**

ຄູ່ສັນຍາທີ່ມີພັນທະຕໍ່ກັບແຕ່ມື້ໄດ້ລົງລາຍເຊັນໃສ່ສັນຍານັ້ນ ແລະ ຈະສິ້ນສຸດລົງຢ່າງອັດຕະໂນມັດໃນມື້ທີ່ກຳນົດໄວ້ໃນເງື່ອນໄຂສະເພາະ.

**5. ການດັດແກ້ໃບປະກັນໄພ.**

ການດັດແກ້ໃບປະກັນໄພນີ້ ຈະມີຜົນສົມບູນກໍ່ຕໍ່ເມື່ອ ບປລ (ແຕ່ບໍ່ແມ່ນຕົວແທນ) ຕົກລົງຮັບການແກ້ໄຂນັ້ນແລ້ວ.

**6.ການແກ້ໄຂຄ່າທຳນຽມ.**

ການແກ້ໄຂຄ່າທຳນຽມປະກັນໄພນີ້ ບປລ ຫລື ຜູ້ໄດ້ຮັບມອບໝາຍ ມີສິດແກ້ໄຂຄ່າທຳນຽມປະກັນໄພຕາມຕາຕະລາງຮອບເຂດຄ່າທຳນຽມ ໃນກໍລະນີອາຍຸຂອງຜູ້ໄດ້ຮັບການປະກັນໄພເພີ່ມຂຶ້ນ.

**7.ການປ່ຽນອາຊີບ.**

ຖ້າຜູ້ປະກັນໄພໄດ້ຮັບບາດເຈັບຫລືເຈັບປ່ວຍໃນຂະນະທີ່ເຮັດວຽກໂດຍມີຄ່າຕອບແທນອື່ນໃນອາຊີບທີ່ມີການສ່ຽງອັນຕະລາຍຫຼາຍກ່ວາອາຊີບທີ່ໄດ້ແຈ້ງໄວ້ແຕ່ທຳອິດ ບໍລິສັດຈະຈ່າຍຄ່າທົດແທນໃຫ້ເປັນຈຳນວນເງິນເທົ່າທີ່ຄ່າທຳນຽມປະກັນໄພທີ່ໄດ້ຮັບຊຳລະແລ້ວສຳລັບອາຊີບເກົ່າ ແລະ ຈະຊື້ການຄຸ້ມກັນສຳຫຼັບ ອາຊີບໃໝ່ໄດ້. ຖ້າຜູ້ເອົາປະກັນໄພປ່ຽນອາຊີບເປັນອາຊີບອື່ນເຊິ່ງບໍລິສັດກຳໜົດໄວ້ວ່າເປັນອາຊີບທີ່ມີການສ່ຽງໄພນ້ອຍກ່ວາອາຊີບທີ່ແຈ້ງໄວ້ກັບບໍລິສັດ ບໍລິສັດຈະຫຼຸດຄ່າທຳນຽມປະກັນໄພລົງ ແລະ ຈະສົ່ງຄ່າທຳນຽມປະກັນໄພໃຫ້ຕາມສ່ວນ ນັບແຕ່ວັນທີ່ບໍລິສັດໄດ້ຮັບຫຼັກຖານການປ່ຽນອາຊີບແລ້ວ.

**8.ລາຍງານການປິ່ນປົວ.**

ເມື່ອຜູ້ໄດ້ຮັບການປະກັນໄພໄດ້ຮັບບາດເຈັບຫລືເຈັບປ່ວຍ ແລະ ຈຳເປັນຕ້ອງໄດ້ຮັບການປິ່ນປົວໃນຖານະຄົນເຈັບໃນໂຮງໝໍ ຫລື ສະຖານທີ່ພະຍາບານ

8.1 ການໄດ້ຮັບການປະກັນໄພ,ຫລື ຜູ້ຕາງໜ້າຈະຕ້ອງແຈ້ງຕໍ່ບປລ ຢ່າງເປັນລາຍລັກອັກສອນກ່ຽວກັບອາການບາດເຈັບ ຫລື
ເຈັບປ່ວຍພາຍໃນກຳນົດ30ວັນນັບແຕ່
ມື້ທີ່ມີຄວາມເສຍຫາຍເກີດຂຶ້ນ.ການລະເວັ້ນການລາຍງານພາຍໃນກຳນົດເວລາດັ່ງກ່າວຈະໄດ້ຮັບການໂຍະຍານກໍຕໍ່ເມື່ອຜູ້ກ່ຽວສາມາດໃຫ້ເຫດຜົນອັນຈຳເປັນທີ່ຕົນບໍ່ສາມາດຈະລາຍງານຕາມກຳນົດນັ້ນໄດ້ແລະການລາຍງານນັ້ນຕ້ອງກະທຳໂດຍໄວທີ່ສຸດເທົ່າທີ່ຈະກະທຳໄດ້.

8.2 **ຜູ້ໄດ້ຮັບການປະກັນໄພ,**ຫລືຜູ້ຕາງໜ້າຈະຕ້ອງສົ່ງຫລັກຖານການປິ່ນປົວຕົວຈິງຕໍ່ ບປລ ຢ່າງເປັນລາຍລັກອັກສອນ ພາຍໃນເວລາ30 ວັນ
ນັບແຕ່ວັນທີ່ອອກຈາກ
ໂຮງໝໍ.

8.3 ບປລ ມີສິດໃຫ້ແພດໝໍເຜີຍແຜ່ການປິ່ນປົວຂອງຜູ້ໄດ້ຮັບການປະກັນໄພໃນຂະນະທີ່ຜູ້ໄດ້ຮັບການປະກັນໄພໄດ້ຮັບການປິ່ນປົວອັນເປັນສາເຫດໃຫ້ມີການຮຽກຮ້ອງສິ່ງທົດແທນປະກັນໄພດັ່ງກ່າວ.

**9. ສິດທີ່ໃນການພິສູດ.**

ບປລ ມີສິດໃຫ້ແພດກວດຮ່າງກາຍຂອງຜູ້ໄດ້ຮັບການປະກັນໄພ ທີ່ໄດ້ຮັບບາດເຈັບ ຫລື ເຈັບປ່ວຍອັນເປັນສາເຫດໃຫ້ມີການຮຽກຮ້ອງສິ່ງທົດແທນປະກັນໄພດັ່ງກ່າວ ແລະ ມີສິດທຳການສັນນະສູດສົບ ເມື່ອມີການເສຍຊີວິດ ເກີດຂຶ້ນ ຖ້າຫາກເປັນການຜິດຕໍ່ກົດໝາຍ.

**10. ປະກັນໄພອື່ນ.**

ຖ້າຜູ້ໄດ້ຮັບປະກັນໄພມີປະກັນໄພອື່ນຊຶ່ງຄຸ້ມກັນຄວາມເສຍຫາຍປະເພດດຽວກັນ,ບປລ ຈະທົດແທນແຕ່ຈຳນວນຄວາມເສຍຫາຍທີ່ຍັງຂາດຢູ່
ຈາກຄວາມເສຍຫາຍ
ທີ່ແທ້ຈິງມີຜູ້ໄດ້ຮັບການປະກັນໄພມີສິດທີ່ໄດ້ຮັບຈາກສັນຍາປະການໄພອື່ນແຕ່ຕ້ອງວບໍ່ເກີນຈຳນວນສິນທົດແທນສູງສຸດ ຕາມທີ່ກຳນົດໄວ້ໃນໃບປະກັນໄພນີ້.

ເຖິງຢາງໃດກໍຕາມຜູ້ໄດ້ຮັບປະກັນໄພຫາກສະລະສິດຕໍ່ບໍລິສັດລາຍໄດ້ ລາຍໜຶ່ງ ກໍຈະເປັນເຫດໃຫ້ກະທົບເຖິງສິດ ແລະ ໜ້າທີ່ທີ່
ບປລ ຕ້ອງທົດແທນຕາມສັນຍາປະກັນໄພນີ້.

**11.ການບອກເລີກສັນຍາປະກັນໄພ.**

11.1 ການຄຸ້ມກັນຈະຖືກຍົກເລີກທັນທີ່ຖ້າຫາກວ່າຄ່າທຳນຽມບໍ່ໄດ້ຊຳລະພາຍໃນໄລຍະເວລາກຳນົດໄວ້.

11.2 ບປລ ຈະຍົກເລີກສັນຍາປະກັນໄພນີ້ໄດ້ດ້ວຍການແຈ້ງລ່ວງໜ້າ ເປັນລາຍລັກອັກສອນບໍ່ຕ່ຳກວ່າ30ວັນ ໂດຍທາງໄປສະນີລົງທະບຽນ ເຖິງຜູ້ໄດ້ຮັບການປະກັນໄພໃນກໍລະນີເຊັ່ນນີ້:ບປລ ຈະສົ່ງຄ່າທຳນຽມຄືນພາຍຫລັງໄດ້ຫັກພູດສ່ວນ ໄລຍະທີ່ໄດ້ຮັບການຄຸ້ມກັນນັ້ນອອກແລ້ວ.

11.3 ຜູ້ໄດ້ຮັບການປະກັນໄພ ຈະຍົກເລີກສັນຍາປະກັນໄພນີ້ໄດ້ ໂດຍການແຈ້ງການໃຫ້ ບປລ ຊາບ ເປັນລາຍລັກອັກສອນ ແລະ ມີສິດໄດ້ຮັບຄ່າທຳນຽມຄືນຫລັງຈາກໄດ້ຫັກພູດສ່ວນໄລຍະທີ່ໄດ້ໃຫ້ການຄຸ້ມກັນອອກຈາກອັດຕາຄ່າທຳນຽມໄລຍະສັ້ນອອກ.

11.4 ການຍົກເລີກຫລືການສິ້ນສຸດຂອງສັນຍາປະກັນໄພນີ້ຈະບໍ່ເປັນເຫດໃຫ້ຜູ້ໄດ້ຮັບການປະກັນໄພເສຍສິດໃນການຮຽກຮ້ອງສິນທົດແທນທີ່ເກີດຂຶ້ນກ່ອນການແຈ້ງຍົກເລີກ ຫລື ການສິ້ນສຸດກຳນົດປະກັນໄພ.

11.5 ກໍລະນີ້ຜູ້ໄດ້ຮັບການປະກັນໄພ ເສຍຊີວິດໃນໄລຍະທີ່ໃບປະກັນໄພຍັງມີຜົນບັງຄັບຢູ່ ບປລ ຈະຄືນຄ່າທຳນຽມປະກັນໄພ ຕາມພູດສ່ວນທີ່ເຫຼືອນັ້ນໃຫ້
(ຕາມຕາຕະລາງລຸ່ມນີ້)

| ຈຳນວນມື້ທີ່ໃຊ້ແລ້ວ | <30 | 31-60 | 61-90 | 91-120 | 121-150 | 151-180 | 181-210 | 211-240 | 241-270 | 271-300 | 301-330 | 331-365 |
|---|---|---|---|---|---|---|---|---|---|---|---|---|
| %ຫຼຸບໃສ່ຄ່າທຳນຽມປີ | 85 | 75 | 65 | 55 | 45 | 35 | 25 | 20 | 15 | 10 | 5 | 0 |

**12. ໄລຍະຍົກເວັ້ນ.**

ສຳລັບຜູ້ໄດ້ຮັບການປະກັນໄພໃໝ່ຈະມີໄລຍະຍົກເວັ້ນດັ່ງນີ້:

0 ວັນສຳລັບການປິ່ນປົວເນື່ອງຈາກອຸປະຕິເຫດທຸກກໍລະນີ

21 ວັນ ສຳລັບການປິ່ນປົວແບບຜູ້ປ່ວຍນອກທຸກກໍລະນີ

60 ວັນ ສຳລັບການປິ່ນປົວແບບຜູ້ປ່ວຍໃນທຸກກໍລະນີ

**13. ຂໍ້ຍົກເວັ້ນ.**

ໃບປະກັນໄພນີ້ ບໍ່ໄດ້ໃຫ້ການຄຸ້ມກັນຄວາມເສຍຫາຍອັນສືບເນື່ອງມາຈາກ:

13.1 ການຂ້າໂຕຕາຍ ຫລື ພະຍາຍາມຂ້າໂຕຕາຍ ຫລື ທຳຮ້າຍຮ່າງກາຍຕົນເອງ.

13.2 ຂະນະບວມຂຶ້ນ ຫລື ພວມລົງ ຫລືຂະນະໂດຍສານຢູ່ໃນອາກາດສະຍານ ທີ່ບໍ່ມີການຈົດທະບຽນເພື່ອບັນທຸກຜູ້ໂດຍສານພານິດ ແລະ ຂະນະພວມຂັບຂີ່ ຫລື ເປັນພະນັກງານປະຈຳຢູ່ໃນອາກາດສະຍານ

13.3 ສົງຄວາມ(ຈະປະກາດຫລືບໍ່ປະກາດກໍຕາມ) ການຮຸກຮານ ຫລື ການກະທຳຂອງສັດຕູຕ່າງຊາດສົງຄາມ ກາງເມືອງການປະຕິວັດ ການກະບົດ ການຈາລະຈົນ ການນັດຢຸດງານ ການກໍ່ຄວາມວຸ້ນວາຍ ເຖິງຂັ້ນລຸກຮືຂຶ້ນຕາມລັດຖະບານ.

13.4 ຜູ້ໄດ້ຮັບການປະກັນໄພມີອາຍຸ65ປີຂຶ້ນໄປ

13.5 ຂະນະທີ່ຜູ້ໄດ້ຮັບການປະກັນໄພ ປະຕິບັດໜ້າທີ່ເປັນທະຫານ, ຕຳຫຼວດ ຫລື ອາສາສະມັກ ແລະ ປະຕິບັດ ການໃນສົງຄາມ ຫລື ປາບປາມ ໃນກໍລະນີ້ຖ້າຜູ້ໄດ້ຮັບການປະກັນໄພ ຫາກປະຕິບັດໜ້າທີ່ດັ່ງກ່າວ ເປັນເວລາຕິດຕໍ່ກັນ 30ວັນ ບປລ
ຈະສົ່ງຄ່າທຳນຽມຄືນໃນອັດຕາສ່ວນສຳລັບໄລຍະປະຕິບັດໜ້າທີ່ດັ່ງກ່າວ.

13.6 ອາວຸດນິວເຄຍການແຜ່ລັງສີ ຫລື ກຳມັນຕະລັງສີ ຈາກເຊື້ອເພີງນິວເຄຼຍ ຫລື ິຈາກນິວເຄຼຍອື່ນໆ ອັນເນື່ອງມາຈາກການໄໝ້ຂອງເຊື້ອເພີງນິວເຄຼຍ ແລະ ຈາກກຳມະວິທີອື່ນໆ ແຫ່ງການແຍກຕົວທາງນິວເຄຼຍຊຶ່ງດຳເນີນຕໍ່ເນື່ອງກັນໄປ.

13.7 ການປິ່ນປົວທາງການແພດ ຂອງຜູ້ໄດ້ຮັບການປະກັນໄພ ກ່ອນວັນທີ່ໃບປະກັນໄພ ມີຜົນບັງຄັບໃນກໍລະນີນີ້ການປະກັນໄພ
ຈະມີຜົນບັງຄັບກໍ່ຕໍ່ເມື່ອຜູ້ໄດ້ຮັບການປະກັນໄພນັ້ນ ໄດ້ຖືກປິ່ນປົວດີເສຍກ່ອນ.

13.8 ການປິ່ນປົວອັນເນື່ອງມາຈາກ ໂຣກພູມຄຸ້ມກັນບົກຜ່ອງ(ເອດສ)

**14.** ລາຍລະອຽດຜົນປະໂຫຍດ:

14.1 ກາປິ່ນປົວໃນຖານະຜູ້ປ່ວຍພາຍໃນ:

ບປລ ຕົກລົງຈະຈ່າຍສິນທົດແທນໃຫ້ແກ່ຜູ້ໄດ້ຮັບການປະກັນໄພ ຕາມຄ່າໃຊ້ຈ່າຍຕົວຈິງ ແລະ ສົມເຫດສົມຜົນດັ່ງຕໍ່ໄປນີ້:

- ຄ່າຫ້ອງຄ່າອາຫານແລະຄ່າເບິ່ງແຍ່ງຂອງແພດລະຫວ່າງເຂົ້ານອນປິ່ນປົວຢູ່ໃນໂຮງໝໍ ບໍລິສັດ ຈະຈ່າຍຄ່າຫ້ອງ ແລະຄ່າອາຫານ ແລະ ຄ່າເບິ່ງແຍງຂອງແພດສຳລັບການບາດເຈັບ ຫລື ການປ່ວຍແຕ່ລະຄັ້ງບໍ່ເກີນຈຳນວນເງິນທີ່ຕ້ອງຈ່າຍຕົວຈິງ ຫລື ຈຳນວນເງິນຈຳກັດ ຕໍ່ວັນ ຫລື ຜົນປະໂຫຍດ ດັ່ງທີ່ກຳນົດໄວ້ໃນຕາຕະລາງປະກັນໄພແລ້ວແຕ່ຈຳນວນໃດຈະໜ້ອຍກວ່າ,ສູງສຸດບໍ່ເກີນ 90 ວັນຕໍ່ການເຈັບປ່ວຍໜຶ່ງຄັ້ງ.

  ໃນກໍລະນີຜູ້ໄດ້ຮັບການປະກັນໄພຈຳຕ້ອງໄດ້ເຂົ້າຮັບການປິ່ນປົວໃນຫ້ອງຜູ້ປ່ວຍໜັກ,ບໍລິສຸດ ຈະຈ່າຍຄ່າຫ້ອງ ແລະ ຄ່າອາຫານ ແລະ ຄ່າເບິ່ງແຍ່ງຂອງແພດສຳລັບການບາດເຈັບ ຫລື ການປ່ວຍແຕ່ລະຄັ້ງບໍ່ເກີນຈຳນວນເງິນທີ່ຕ້ອງຈ່າຍຕົວຈິງ ຫລື
  ຈຳນວນເງິນບໍ່ເກີນ2ຄັ້ງຕໍ່ວັນຂອງຜົນປະໂຫຍດດັ່ງທີ່ໄດ້ກຳນົດໄວ້ໃນຕາຕະລາງປະກັນໄພແລ້ວແຕ່ຈຳນວນໃດຈະໜ້ອຍກວ່າ,ສູງສຸດກຳນົດ7ວັນຕໍ່ການເຈັບປ່ວຍໜຶ່ງຄັ້ງ.ສິນທົດແທນສູງສູດຂອງການເຂົ້ານອນປິ່ນປົວຢູ່ໃນໂຮງໝໍ ແລະ ການເຂົ້າປິ່ນປົວໃນຫ້ອງຜູ້ປ່ວຍໜັກ
  ລວມກັນບໍ່ເກີນ90ວັນຕໍ່ການເຈັບປ່ວຍໜຶ່ງຄັ້ງ.

- ຄ່າໃຊ້ຈ່າຍທົ່ວໄປໃນໂຮງໝໍ:
  ຕະຫລອດໄລຍະເວລາທີ່ຜູ້ໄດ້ຮັບການປະກັນໄພໄດ້ເຂົ້າຮ່ວມຮັບການປິ່ນປົວໃນຖານະຜູ້ປ່ວຍໃນ, ບປລ ຈະຈ່າຍຄ່າໃຊ້ທົ່ວໄປໃນໂຮງໝໍດັ່ງນີ້:
  ກ) ຄ່າຢາທີ່ສອດຄ້ອງກັບພະຍາດອັນທີ່ເປັນສາເຫດຂອງການເຂົ້າຮັບການປິ່ນປົວໃນໂຮງໝໍ ແລະ ເພື່ອໃຊ້ໃນໂຮງໝໍ
  ຂ) ຄ່າຢົບບາດແຜ ແລະ ຄ່າຕົບແຕ່ງບາດແຜ,ການເຂົ້າເຝືອກ,ຍົກເວັ້ນອຸປະກອນແລະເຄື່ອງມືເຄື່ອງໃຊ້ຕ່າງໆ
  ຄ) ຄ່າກາຍຍະພາບບຳບັດ
  ງ) ຄ່າຊ່ອງລັງສີ,ກວດຫົວໃຈຫົວດ້ວຍຄື້ນໄຟຟ້າ ແລະ ການກວດໃນຫ້ອງປະຕິບັດການຊຶ່ງມີຄວາມຈຳເປັນໃນການກວດເພື່ອບົ່ງມະຕິພະຍາດໃນຄັ້ງນັ້ນ
  ຈ) ຄ່າທຳນຽມການສັກຢາເຂົ້າໃນເສັ້ນເລືອດ
  ສ) ຄ່າທຳນຽມການໃຫ້ເລືອດ ຫລື ພລາສມາ.
  ຊ) ຄ່າບໍລິການຂອງລົດພະຍາບານສຳລັບໄປຫລືມາຈາກໂຮງໝໍ ຕໍ່ການປ່ວຍຫລືບາດເຈັບແຕ່ລະຄັ້ງ ບປລ ຈະຈ່າຍຕາມລາຍຈ່າຍຕົວຈິງ
  ແຕ່ບໍ່ເກີນອັດຕາຄ່າຫ້ອງ ແລະ ອາຫານ 1ວັນ.

ບໍລິສັດຈະຈ່າຍສິນທົດແທນຜົນປະໂຫຍດຂ້າງຕົ້ນໃຫ້ຕາມຜູ້ທີ່ໄດ້ຮັບການປະກັນໄພຈ່າຍຕົວຈິງແຕ່ເມື່ອລວມກັນທັງໝົດແລ້ວຈະຕ້ອງບໍ່ເກີນຈຳນວນສິນທົດແທນຜົນປະໂຫຍດຂອງຄ່າໃຊ້ຈ່າຍທົ່ວໄປໃນໂຮງໝໍ ທີ່ກຳນົດໄວ້ໃນຕາຕະລາງຜົນປະໂຫຍດ ຕໍ່ການເຈັບປ່ວຍຄັ້ງໃດໜຶ່ງ.

- **ຄ່າທຳນຽມການຜ່າຕັດ**
  ບໍລິສັດຈະຈ່າຍຄ່າທຳນຽມການຜ່າຕັດ ໃນຖານະຜູ້ປ່ວຍໃນບໍ່ເກີນຈຳນວນທີ່ຜູ້ໄດ້ຮັບການປະກັນໄພຈ່າຍຕົວຈິງ ແລະ ຈະຕ້ອງບໍ່ເກີນຈຳນວນເງິນທີ່ກຳນົດໄວ້ໃນຕາຕະລາງອັດຕາຄ່າທຳນຽມຜ່າຕັດ ຊຶ່ງໄດ້ລະບຸໄວ້ເປັນເປີເຊັນຂອງຜົນປະໂຫຍດຄ່າທຳນຽມການຜ່າຕັດ ທີ່ກຳນົດໄວ້ໃນຕາຕະລາງຜົນປະໂຫຍດຕໍ່ການເຂົ້າປິ່ນປົວໃນໂຮງໝໍຄັ້ງໃດໜຶ່ງ.
  ໃນກໍລະນີການຜ່າຕັດເກີນກວ່າໜຶ່ງຄັ້ງ ໃນແຜດຽວກັນຂອງຮ່າງກາຍ ການຄຸ້ມຄອງຄ່າໃຊ້ຈ່າຍທີ່ເກີດຂື້ນນັ້ນ ຈະຕ້ອງບໍ່ເກີນຈຳນວນເງິນທີ່ລະບຸສຳລັບການຜ່າຕັດໜຶ່ງຄັ້ງໃດໜຶ່ງ ໂດຍຖືເອົາອັດຕາຄ່າທຳນຽມຜ່າຕັດທີ່ມີຜົນປະໂຫຍດສູງສຸດເປັນເກນໃນການຈ່າຍການຜ່າຕັດອື່ນໆໃດໆທີ່ບໍ່ລະບຸ
  ໃນຕາຕະລາງອັດຕາຄ່າທຳນຽມຜ່າຕັດ ຈະໄດ້ຮັບການທົດແທນໃນຈຳນວນທີ່ເໝາະສົມ.
- **ຄ່າທຳນຽມການຜ່າຕັດນ້ອຍ**
  ບໍລິສັດຈະຈ່າຍຄ່າທຳນຽມການຜ່າຕັດນ້ອຍ ໃນຖ້ານະຜູ້ປ່ວຍນອກບໍ່ເກີນຈຳນວນທີ່ຜູ້ໄດ້ຮັບການປະກັນໄພຈ່າຍຕົວຈິງ ແຕ່ການຜ່າຕັດຄັ້ງນີ້ຈະຕ້ອງເປັນການຜ່າຕັດທີ່ມີໃນຕາຕະລາງອັດຕາຄ່າທຳນຽມຜ່າຕັດເທົ່ານັ້ນ ແລະ ຈະຈ່າຍບໍ່ໃຫ້ເກີນຈຳນວນເງິນທີ່ກຳນົດໄວ້ໃນຕາຕະລາງ ອັດຕາຄ່າທຳນຽມຜ່າຕັດຊຶ່ງໄດ້ລະບຸໄວ້ເປັນເປີເຊັນຂອງຜົນປະໂຫຍດ ຄ່າທຳນຽມການຜ່າຕັດທີ່ກຳນົດໄວ້ໃນຕາຕະລາງຜົນປະໂຫຍດ.
- **ຄ່າຫ້ອງຜ່າຕັດ**
  ບໍລິສັດຈະຈ່າຍຄ່າຫ້ອງຜ່າຕັດໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພມີສິດໄດ້ຮັບຄ່າທຳນຽມການຜ່າຕັດ
  ຕາມຈຳນວນເງິນຜູ້ໄດ້ຮັບການປະກັນໄພຈ່າຍຕົວ
  ຈິງດັ່ງນີ້:
  1.ຄ່າໃຊ້ຫ້ອງຜ່າຕັດ
  2.ຄ່າອຸປະກອນຕ່າງໆ ໃນຫ້ອງຜ່າຕັດ
  ແຕ່ການຜ່າຕັດຄັ້ງນີ້ຈະຕ້ອງບໍ່ເກີນຈຳນວນເງິນທີ່ກຳນົດໄວ້ໃນຕາຕະລາງຜົນປະໂຫຍດ ຕໍ່ການເຂົ້າປິ່ນປົວໃນໂຮງໝໍຄັ້ງໃດໜຶ່ງ.
- **ຄ່າວາງຢາສະລົບ**
  ບໍລິສັດຈະຈ່າຍຄ່າວາງຢາສະລົບໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພມີສິດໄດ້ຮັບຄ່າທຳນຽມການຜ່າຕັດ
  ຕາມຈຳນວນເງິນຜູ້ໄດ້ຮັບການປະກັນໄພຈ່າຍ
  ຕົວຈິງ ແຕ່ການຜ່າຕັດຄັ້ງນີ້ຈະຕ້ອງບໍ່ເກີນຈຳນວນເງິນທີ່ໄດ້ກຳນົດໄວ້ໃນຕາຕະລາງຜົນປະໂຫຍດ ຕໍ່ການປິ່ປົວໃນໂຮງໝໍຄັ້ງໃດຄັ້ງໜຶ່ງ.
- **ຄ່າກວດປິ່ງມະຕິພະຍາດໃນຫ້ອງທົດລອງຕ່າງໆ ໃນຖ້ານະຜູ້ປ່ວຍນອກ**
  ບໍລິສັດຈະຈ່າຍຄ່າກວດປິ່ງມາຕິພະຍາດໃນເມື່ອຜູ້ໄດ້ຮັບການປະກັນໄພຕ້ອງເຂົາຮັບການກວດປິ່ງມະຕິພະຍາດດ້ວຍການຊ່ອງໄຟຟ້າລັງສີ-ເອກສເຣການກວດຫົວໃຈດ້ວຍຄື້ນໄຟຟ້າ ຫລື ການກວດໃນຫ້ອງປະຕິບັດ-ເນື່ອງຈາກການບາດເຈັບທາງຮ່າງກາຍທີ່ໄດ້ຮັບຈາກອຸປະຕິເຫດ ຫລື ການເຈັບປ່ວຍຍ້ອນພະຍາດ ຕາມຈຳນວນທີ່ໄດ້ຮັບການປະກັນໄພຈ່າຍຕົວຈິງ ໃນຖ້ານະຜູ້ຕົວນອກ ແຕ່ການຈ່າຍຄັ້ງນີ້ຈະຕ້ອງບໍ່ເກີນຈຳນວນຜົນປະໂຫຍດຄ່າກວດປິ່ງມະຕິພະຍາດໃນຫ້ອງທົດລອງຕ່າງໆໃນຖານະຜູ້ປ່ວຍນອກທ່ກຳນົດໄວ້ຕາຕະລາງຜົນປະໂຫຍດຕໍ່ການເຈັບຫລືການປ່ວຍຄັ້ງໃດໜຶ່ງໂດຍຈະຈ່າຍຜົນປະໂຫຍດດັ່ງກ່າວສະເພາະໃນກໍລະນີທີ່ການກວດນັ້ນເນື່ອງຈາກຜູ້ໄດ້ຮັບການປະກັນໄພຕ້ອງເຂົ້າຮັບການປິ່ນປົວເປັນຜູ້ປ່ວຍໃນຂອງໂຮງໝໍ ແລະ ການກະທຳດັ່ງກ່າວເກີດຂື້ນພາຍໃນ30ວັນ ກ່ອນຫລືຫລັງ ການເຂົ້າຮັບການປິ່ນປົວໃນໂຮງໝໍນັ້ນ.
- **ຄ່າປຶກສາແພດ** ບໍລິສັດຈະຈ່າຍຄ່າປຶກສາແພດ ໃນການກວດປິ່ນປົວ ຊຶ່ງໂຮງໝໍໃຫ້ການປິ່ນປົວເບິ່ງແຍ່ງແພດຕາມປົກກະຕິໃນຖ້ານະຜູ້ປ່ວຍໃນຕາມຈຳນວນເງິນທີ່ຜູ້ຮັບປະກັນໄພຈ່າຍຕົວຈິງ ແຕ່ລະຄັ້ງບໍ່ເກີນຈຳນວນເງິນທີ່ກຳນົດໄວ້ໃນຕາຕະລາງຜົນປະໂຫຍດຕໍ່ຄັ້ງ,ສູງສຸດບໍ່ເກີນ90ຄັ້ງ ຫລື ບໍ່ຫລາຍກວ່າຈຳນວນມື້ທີ່ເຂົ້າປິ່ນປົວໂຮງໝໍແລ້ວແຕ່ຈຳນວນໃດຈະໜ້ອຍກວ່າ.
- **ຄ່າປິ່ນປົວສຸກເສີນ** ອັນເນື່ອງຈາກອຸບັດຕິເຫດ ບໍລິສັດຈະຈ່າຍໃນຖ້ານະຜູ້ປ່ວຍພາຍນອກຖ້າຫາກວ່າຜູ້ໄດ້ຮັບປະກັນໄພປະສົບກັບອຸບັດຕິເຫດ ແລະ ໄດ້ເຂົ້າຮັບການປິ່ນປົວສຸກເສີນໃນພະແນກຜູ້ປ່ວຍນອກຂອງໂຮງໝໍພາຍໃນ24 ຊົ່ວໂມງນັບຕັ້ງແຕ່ເວລາເກີດອຸປະຕິເຫດ
  ໂດຍຈະຈ່າຍເງິນໃຫ້ເທົ່າກັບ
  ກັບຈຳນວນເງິນທີ່ຜູ້ໄດ້ຮັບການປະກັນໄພຈ່າຍຕົວຈິງ ແຕ່ລະຄັ້ງຈະບໍ່ເກີນຈຳນວນເງິນຜົນປະໂຫຍດ ຄ່າປິ່ນປົວສຸກເສີນເນື່ອງມາຈາກອຸປະຕິເຫດທີ່ກຳນົດໄວ້ໃນຕາຕະລາງຜົນປະໂຫຍດ ແລະ ຖ້າຫາກຜູ້ໄດ້ຮັບການປະກັນໄພຕ້ອງເຂົ້າຮັບການປິ່ນປົວໃນໂຮງໝໍໃນຖານະຜູ້ປ່ວຍໃນ
  ອັນເປັນຜົນສືບ
  ເນື່ອງມາຈາກການບາດເຈັບຄັ້ງດຽວກັນນີ້ ຈຳນວນເງິນຄ່າປິ່ນປົວສຸກເສີນທີ່ເກີດຂື້ນກ່ອນແລ້ວຈະນຳໄປຄິດໄລ່ຮ່ວມກັນຢູ່ກັບຄ່າປິ່ນປົວທົ່ວໄປໃນໂຮງໝໍ.

<u>**ຂໍ້ຍົກເວັ້ນ**</u> ການປະກັນໄພຕາມສັນຍາຄຸ້ມກັນນີ້ຈະບໍ່ຈ່າຍສິນທົດແທນສຳລັບ

1) ການປິ່ນປົວ ເພື່ອການພັກຜ່ອນ ຫລື ອະນາໄມ
2) ການບໍລິການທີ່ບໍ່ກ່ຽວຂ້ອງກັບການປິ່ນປົວ ເຊັ່ນ:ການໃຊ້ວິທະຍຸ,ໂທລະສັບ,ໂທລະທັດ ໜັງສືພິມ
3) ການວິໄຈພະຍາດ ເວັ້ນແຕ່ໄດ້ເຂົ້າປິ່ນປົວຢູ່ໃນໂຮງພະຍາບານບໍ່ໜ້ອຍກວ່າ 6ຊົ່ວໂມງ
4) ການບໍລິການໂດຍສັນຍະແພດ ແພດຝຶກຫັດ ຫລື ພະຍາບານພິເສດ.
5) ການປິ່ນປົວໂຣກປະສາດ ຫລື ວິກົນຈິດ,ການຕິດສຸລາຊ້ຳເຮື້ອ,ການຕິດຢາເສບຕິດ,ກາມະໂຣກ,ກຳມະພັນ ຫລື ການບົກຜ່ອງຂອງຮ່າງກາຍທີ່ເປັນມາແຕ່ເກີດ.
6) ການທຳໝັນເພດໃດເພດໜຶ່ງ.
7) ການເຂົ້າປິ່ນປົວ ຫລື ການຜ່າຕັດຢູ່ໃນໂຮງພະຍາບານທີ່ບໍ່ມີການແນະນຳໂດຍແພດ ຫລື ແພດສັນຍາກຳ

8) ການບໍລິການ ກ່ຽວກັບການຖືພາ,ລວມທັງການເກີດລູກ,ການຫລຸລູກ
9) ການບໍລິການ ແລະ ການປິ່ນປົວເດັກເກີດໃຫມ່
10) ການປິ່ນປົວແຂ້ວ,ເຮັດແຂ້ວທຽມ,ການກວດສາຍຕາ,ແວ່ນຕາ,ເຄື່ອງຊ່ວຍເຮັດໃຫ້ໄດ້ຍິນສຽງ, ເຄື່ອງກະຕຸ້ນຫົວໃຈ ແລະ ການຜ່າຕັດເພື່ອຄືນງາມ ຫລື ການຜ່າຕັດເພື່ອຕົບແຕ່ງ ເວັ້ນແຕ່ຈຳເປັນເພື່ອ ການຊ້ອມແຊມ ຫລື ບັນເທົາຄວາມເສຍຫາຍຕໍ່ຜູ້ໄດ້ຮັບການເສຍຫາຍອັນເກີດຈາກການບາດເຈັບໂດຍອຸປະຕິເຫດ.
11) ການບໍລິການກ່ຽວກັບການບາດເຈັບ ຫລື ປ່ວຍຊຶ່ງຜູ້ໄດ້ຮັບການປະກັນໄພມີສິດໄດ້ຮັບຜົນປະໂຫຍດພາຍໃຕ້ກົດຫມາຍແຮງງານ ຫລື ກົດຫມາຍໃດຫນຶ່ງທີ່ຄ້າຍຄືກັນ
12) ການບໍລິການກ່ຽວກັບການບາດເຈັບ ຫລື ການປ່ວຍອັນເກີດຈາກການຫວັງຜົນກຳໄລຈາກປະກັນໄພ
13) ການບໍລິການກ່ຽວກັບກາຍະບຳບັດ,ກວດເຊັກສຸຂະພາບທົ່ວໄປ,ການພັກຟື້ນ ການປິ່ນປົວອາການອ່ອນເພຍ ຫລື ມີຈຸດປະສົງເພື່ອບົ່ງມະຕິພະຍາດ.

**14.2 ການປິ່ນປົວໃນນາມຄົນປ່ວຍພາຍນອກ.**

ໂດຍການເຫັນດີ,ຜູ້ໄດ້ຮັບການປະກັນໄພທີ່ໄດ້ຮັບການປິ່ນປົວຕາມຄວາມຈຳເປັນທາງການແພດໃນພະແນກຜູ້ປ່ວຍນອກ ຫລື ຫ້ອງສຸກເສີນຂອງໂຮງຫມໍ ຫລື ຄລີນິກໃດຫນຶ່ງ ທີ່ມີສາຍເຫດມາຈາກການບາດເຈັບ ຫລື ການປ່ວຍ
ບໍລິສັດຈະຈ່າຍເງິນຜົນປະໂຫຍດຕາມຕົວຈິງຢ່າງສົມເຫດສົມຜົນດັ່ງນີ້:ຄ່າກວດໂດຍ
ແພດ,ຄ່າບໍລິການພະຍາບານ ແລະ ຄ່າຢາທີ່ໃຊ້ຈ່າຍສຳລັບຄ່າປິ່ນປົວພາຍນອກ,ຄ່າກາຍບໍລິການຍະບຳບັດ,ຄ່າກວດບົ່ງມະຕິພະຍາດ,ຄ່າກວດສ່ອງດ້ວຍລັງສີ,ແລະ ອຸປະກອນປິ່ນປົວຕ່າງໆ.ບໍລິສັດຈະຈ່າຍເງິນຜົນປະໂຫຍດບໍ່ເກີນ1ຄັ້ງຕໍ່ວັນຫລື ສູງສຸດບໍ່ເກີນ30ຄັ້ງຕໍ່ປີ.
ແຕ່ການຈ່າຍແຕ່ລະຄັ້ງຈະບໍ່ເກີນຈຳນວນເງິນທີ່ກຳນົດໄວ້ໃນເງື່ອນໄຂສະເພາະຂອງສັນຍາປະກັນໄພ.

ໃນກໍລະນີ້ຜູ້ໄດ້ຮັບການປະກັນໄພຫາກໄດ້ຮັບເງິນພົນປະໂຫຍດຜູ້ປ່ວຍນອກໃດຫນຶ່ງພາຍໃຕ້ສັນຍາ ແລະ ເອກະສານຂັດຕິດສັນຍາສະບັບນີ້ບໍລິສັດຈະຈ່າຍພຽງແຕ່ ຜົນປະໂຫຍດສ່ວນພິດດ່ຽງຊຶ່ງບໍ່ເກີນຈຳນວນເງິນທີ່ລະບຸໄວ້ຂ້າງເທິງ.

**ຂໍ້ຍົກເວັ້ນ** ການປະກັນໄພຕາມສັນຍານີ້ຈະບໍ່ຈ່າຍຜົນປະໂຫຍດສຳລັບ

(1) ການບໍລິການລະຫວ່າງການປິ່ນປົວຕົວເພື່ອພັກຜ່ອນ ຫລື ອະນາໄມ
(2) ການບໍລິການກ່ຽວກັບການປິ່ນປົວໂຣກປະສາດ ຫລື ວິກົນຈິດ ການຕິດສຸລາຊຳເຮື້ອ ການຕິດຢາເສບຕິດ ກຳມະໂຣກກຳມະພັນ ຫລື ຄວາມບົກຜ່ອງຂອງຮ່າງກາຍທີ່ເປັນມາແຕ່ເກີດ
(3) ການບໍລິການກ່ຽວກັບການຜ່າຕັດການປົວແຂ້ວ ຫລື ການກວດສາຍຕາ
(4) ການບໍລິການກ່ຽວກັບການຖືພາ ລວມທັງການເກີດລູກ ການຫລຸລູກ
(5) ການບໍລິການບຳບັດ ຫລື ການກວດສຸຂະພາບ ຫລື ການສັກຢາປ້ອງກັນພະຍາດໃດຫນຶ່ງ ຫລື ການກວດດ້ວຍລັງສີອີກສ(RayonX)ຫລື ໂດຍວິທີອື່ນເພື່ອຈຸດປະສົງໃນການວິໃຈໂຣກເທົ່ານັ້ນ.
(6) ການທຳຫມັນເພດໃດເພດຫນຶ່ງ
(7) ການພະຍາບານເດັກເກີດໃຫມ່
(8) ການບໍລິການກ່ຽວກັບການບາດເຈັບ ຫລື ການເຈັບປ່ວຍສະເພາະສ່ວນທີ່ຜູ້ໄດ້ຮັບການປະກັນໄພມີສິດໄດ້ຮັບຜົນປະໂຫຍດຕາມກົດຫມາຍ
(9) ການບໍລິການກ່ຽວກັບການບາດເຈັບ ຫລື ການປ່ວຍ ອັນເກີດຂຶ້ນເພື່ອຫວັງຜົນກຳໄລຈາກປະກັນໄພ
(10) ການພະຍາບານໃນຄລີນິກ ຫລື ພະແນກຜູ້ປ່ວຍນອກຂອງໂຮງພະຍາບານທີ່ເກີນປີລະ30ຄັ້ງ.

**ຕາຕະລາງ ສິນທົດແທນຜ່າຕັດ**

| ຊະນິດຂອງການຜ່າຕັດ | ອັດຕາສິນທົດແທນສູງສຸດ |
|---|---|
| ຜົ້ງທ້ອງ | |
| - ການຕັດເອົາໄສ້ຕິ່ງອອກ | 50,00% |
| - ການຜ່າຕັດລຳໄສ້ | 75,00% |
| - ການຜ່າຕັດກະເພາະອາຫານ | 75,00% |
| - ການຕໍ່ກະເພາະອາຫານ ແລະ ລຳໄສ້ | 65,00% |
| - ການປາດເອົາຖົງບີອອກ | 75,00% |
| - ການຜ່າຕັດບໍລິເວນທ້ອງເພື່ອການບົ່ງມະຕິ,ການປິ່ນປົວ ຫລື ການຜ່າຕັດເອົາຫນຶ່ງ ຫລື ຫລາຍ ອະໄວຍະວະທີ່ຢູ່ທາງໃນນັ້ນອອກ ຍົກເວັ້ນອັນອື່ນທີ່ໄດ້ກ່າວໄວ້ໃນນັ້ນ,ການຜ່າຕັດແຕ່ສອງຄັ້ງຫລື ຫລາຍກວ່ານັ້ນ ກ່ຍວກັບພະຍາດອັນດຽວກັນ ໃຫ້ຖືວ່າເປັນການຜ່າຕັດຄັ້ງດຽວ | 55,00% |
| ອັບແຊ | |
| - ການແຫກ ລະບາຍອັບແຊທີ່ຢູ່ຕົ້ນ,ຝີຫນອງ,ນິ່ງ ຫລື ຫລາຍກວ່ານັ້ນ | 5,00% |
| - ການປິ່ນປົວຝີມີ ຫລາຍຫົວ (ຝີຮັງຕໍ່) ຫລື ອັບແຊພ້ອມກັນໂຮງຫມໍ | 12,50% |

<u>ການຕັດກຸດ</u>

| | |
|---|---|
| - ນິ້ວມື ຫລືນິ້ວຕີນ: ແຕ່ລະນິ້ວ | 7,50% |
| - ມື,ປາຍແແຂນ ຫລື ຕີນຮອດຂໍ້ຕີນ | 30,00% |
| - ແຂ່ງ,ແຂນ ຫລື ກົກຂາ | 50% |
| - ກົກຂາ ຮອດກະໂພກ | 75,00% |
| - ການຕັດເຄິ່ງໂຕທາງລຸ່ມອອກຫມົດ | 100,00% |

<u>ນົມ</u>

| | |
|---|---|
| - ການຜ່າຕັດເອົານົມ ເບື້ອງຫນຶ່ງ ຫລື ສອງເບື້ອງອອກຫມົດ ຫລື ການຜ່າຕັດເຂົ້າຫາກ້ອງຂີ້ແຮ້ | 85,00% |
| - ການຜ່າຕັດເອົານົມເບື້ອງຫນຶ່ງ ຫລື ສອງເບື້ອງອອກ ແບບທຳມະດາ | 67,00% |

<u>ຜົ້ງເອິກ</u>

| | |
|---|---|
| - ການຜ່າຕັດແປງຜົ້ງເອິກຢ່າງຄົບຖ້ວນ | 100,00% |
| - ການຜ່າຕັດເອົາປອດອອກທັງຫມົດ | 100,00% |
| - ການຜ່າຕັດເອົາປອດ ຫລື ພາກສ່ວນຫນຶ່ງຂອງປອດອອກ | 90,00% |
| - ການຜ່າເຂົ້າໄປໃນຜົ້ງເອິກເພື່ອການບົກມະຕິ ຫລື ການປິ່ນປົວອະໄວຍະວະພາຍໃດຫນຶ່ງທີ່ຢູ່ຂ້າງໃນ ຍົກເວັ້ນການບົ່ງດູດ | 50,00% |
| - ການລະບາຍຫນອງອອກ ຍົກເວັ້ນການດູດ | 12,50% |
| - ການເຮັດໃຫ້ມີລົມຢູ່ຜົ້ງເອິກເອງ | 12,50% |
| - ການບັນຈຸແຕ່ລະຂ້າງ ແຕ່ຕ້ອງບໍ່ເກີນ6ຄັ້ງ | 2,50% |
| - ການບົ່ງມະຕິດ້ວຍການຊ່ອງເບິ່ງຫລອດປອດ | 20,00% |
| - ການຜ່າຕັດ,ຍົກເວັ້ນເອົາຊິ້ນສ່ວນນ້ອຍໆໄປກວດ | 50,00% |

<u>ຫູ</u>

| | |
|---|---|
| - ການຜ່າຕັດເຈັ້ຍຫູ | 10,00% |
| - ການຜ່າຕັດມັສຕອຍ ທັງຫມົດຂ້າງດຽວ | 55,00% |
| - ການຜ່າຕັດຕອຍ ຫມົດທັງສອງຂ້າງ | 80,00% |
| - ການຜ່າຕັດເພື່ອໃຫ້ໄດ້ຍິນສຽງ ຂ້າງດຽວ ຫລື ທັງສອງຂ້າງ | 100,00% |
| - ການຜ່າຕັດກ່ຽວກັບກະດູກກລິ່ນໃນຫູສ່ວນກາງ (stapedectomy) | 50,00% |

<u>ຫລອດອາຫານ</u>

| | |
|---|---|
| - ການຜ່າຕັດຫລອດອາຫານຕີບ | 40,00% |
| - ການໃຊ້ກ້ອງສ່ອງກະເພາະອາຫານ | 25,00% |

<u>ຕາ</u>

| | |
|---|---|
| - ການເອົາວັດຖຸນອກຕາອອກ,ອອກຈາກແກ້ວຕາ | 5,00% |
| - ຈໍຮັບພາບຫລຸດອອກ | 100,00% |
| - ແກ່ນຕາຂຸ້ນ | 60,00% |
| - ຕາກະດັນ | 45,00% |
| - ການເອົາຫນ່ວຍຕາອອກ | 45,00% |
| - ການຕັດເອົາຊີ້ນປີ່ງອອກ | 30,00% |
| - ການແທກ ລະບາຍຕາ ຕາຕໍ້,ຕາຕອນ | 10,00% |

<u>ກະດູກຫັກ</u>

| | |
|---|---|
| - ການປິ່ນປົວກະດູກໄມ້ຄານແບບທຳມະດາ,ກະດູດເອື້ອງ ຫລື ກະດູກປາຍແຂນ ຫນຶ່ງກະດູກ | 25,00% |
| - ກະດູກກົ້ນສຸດ ກະດູກຕີນ,ກະດູກປາຍຕີນ ຫລື ກະດູກສົ້ນນ່ອງ | 25,00% |
| - ກົກຂາ | 55,00% |
| - ພາກສ່ວນເທິງຂອງກະດູກກົກແຂນ ຫລືແຂ່ງ ຫນຶ່ງ ກະດູກ | 40,00% |
| - ນິ້ວຕີນ ແຕ່ລະນິ້ວ ຫລື ກະດູກຂ້າງ | 15,00% |

| | |
|---|---|
| - ສອງກະດູກປາຍແຂນ,ຫມາກບ້າຫົວເຂົ່າ,ກະດູກຊາມ ໂດຍບໍ່ໄດ້ດຶງ | 60,00% |
| - ສອງກະດູກແຂ່ງ | 50,00% |
| - ກະດູກຄາງກະໄຕລຸ່ມ | 35,00% |
| - ກະດູກມືກະດູກປາຍມື ດັ່ງ ກະດູກຂ້າງ ສອງທ່ອນ ຫລື ຫລາຍກວ່ານັ້ນ ຫລື ກະດູກໜ້າເອິກ | 25,00% |
| - ກະດູກຊາມ,ໄດ້ດຶງ | 31,00% |
| - ກະດູກສັນຫລັງ, ກະດູກສັນຫລັງທ່ອນຂວາງ ແຕ່ລະອັນ | 20,00% |
| - ກະດູກສັນຫລັງ ການຫັກດ້ວຍການຫນີບເຕັງ ນຶ່ງ ຫລືຫລາຍ | 50,00% |
| - ຂໍ້ມື | 30,00% |
| - ການຫັກເປີດ, ຫັກຫລາຍປ່ຽງ: | |
| ສໍາລັບການແຕກຫັກເປີດ ຫລື ຫັກຫລາຍປ່ຽງໃຫ້ເພີ້ມຜົນປະໂຫຍດຂ້າງເທິງນີ້ອີກ | 95,00% |
| ສໍາລັບການແຕກຫັກຊຶ່ງຕ້ອງຜ່າຜັດ ທີ່ກ່ຽວພັນກັບກະດູກໃຫ້ເພີ້ມຜົນປະໂຫຍດຂ້າງເທິງນີ້ອີກ | 100,00% |

<u>ທາງເດີນປັດສະວະ ແລະ ສືບພັນ</u>

| | |
|---|---|
| ການຜ່າຕັດເອົາຫມາກໄຂ່ຫລັງອອກ | 75,00% |
| ການເອົາຫມາກໄຂ່ຫລັງເຂົ້າທີ່ | 75,00% |
| ການຜ່າຕັດເອົາກ້ອນເບົ້າອອກ, ຫນີ້ວໃນຫມາກໄຂ່ຫລັງ,ທໍ່ຍ່ຽວ ຫລື ພົກຍ່ຽວ | 75,00% |
| ການຈູດໂດຍໃຊ້ເຄື່ອງຊ່ອງເຂົ້າໄປໃນ | 35,00% |
| ທໍ່ຍ່ຽວຕີບ ດ້ວຍການຜ່າຕັດ | 50,00% |
| ການຜ່າຕັດເຂົ້າໄປໃນທໍ່ຍ່ຽວ | 20,00% |
| ການຜ່າຕັດລູກຫມາກອອກດ້ວຍວິທີການຄົບຖ້ວນ | 75,00% |
| ການຜ່າຕັດເອົາຕ່ອມລູກຫມາກອອກ ເປັນພາກສ່ວນ ດ້ວຍເຄື່ອງຊ່ອງເຂົ້າໄປຂ້າງໃນ | 60,00% |
| ດ້ວຍວິທີຜ່າຕັດອື່ນໆ | 60,00% |
| ການຜ່າຕັດເອົາແກ່ນອັນທະອອກ, ການຜ່າຕັດເອົາຫມວກປົກແກ່ນອະທະອອກ | 37,50% |
| ຖົງຫໍາຊຶມນໍ້າ,ເສັ້ນເລືອດດໍາຕຶ່ງເປັນຖົງ | 37,50% |
| ການຜ່າຕັດມົດລູກອອກຫມົດ ສໍາລັບມະເຮັງ | 100,00% |
| ການຜ່າຕັດລູກນອກພົກ | 60,00% |
| ການຜ່າຕັດມົດລູກອອກພ້ອມທັງເອົາຮວຍໄຂ່, ທໍ່ສົ່ງໄຂ່(ປີກມົດລູກ)ແລະ ເອົາຫລືບໍ່ເອົາໄສ້ຕິ່ງອອກ | 70,00% |
| ການຂູດຫລືການຈູດປາກມົດລູກ ທີ່ບໍ່ກ່ຽວກັບການຖືພາ | 10,00% |
| ການຍະ ແລະ ຂູດມົດລູກ ທີ່ບໍ່ກ່ຽວກັບການຖືພາ | 20,00% |
| ການປາດແປງອ້ອມຮູທະວານ ຫລື ຊ່ອງຄອດຈີກຂາດ;ບໍ່ເຮັດທັນໃດໂລດພາຍຫລັງການເກີດລູກ ລວມເອົາການມີພົກຍ່ຽວຢ່ອນເປັນຖົງ ແລະ ໃສ້ແກ່ທ່ອນສຸດຢ່ອນເປັນຖົງ | 37,50% |
| ການຕັດເອົາກ້ອນເບົ້າທີ່ຄ້າຍຄືໃຍອອກໂດຍບໍ່ທໍາການຜ່າຕັດເຂົ້າໄປໃນຫນ້າທ້ອງ | 30,00% |

<u>ຄໍຫມຽງ</u>

| | |
|---|---|
| ການຕັດເອົາຄໍຫມຽງອອກ,ລວມທຸກຂັ້ນຂອງວິທີການຜ່າຕັດ | 75,00% |

<u>ອະໄວຍະວະລອດ</u>

| | | |
|---|---|---|
| ການປິ່ນປົວດ້ວຍການສັກ,ວິທີການຄົບຖ້ວນ: | -ອະໄວຍະວະລອດທໍາມະດາ | 45,00% |
| | -ອະໄວຍະວະລອດເປັນຄູ່ | 45,00% |
| ການຜ່າຕັດອອກຫມົດ ລວມທັງການປິ່ນປົວ ການສັກ: | -ສໍາລັບ ອະໄວຍະວະລອດທໍາມະດາ | 45,00% |
| | -ສໍາລັບ ອະໄວຍະວະລອດເປັນຄູ່ | 65,00% |

<u>ຂໍ້ ແລະ ການຫລຸດໂບກຂອງຂໍ້</u>

| | |
|---|---|
| ການແທກເຂົ້າໄປໃນຂໍ້ ສໍາລັບພະຍາດ ແລະ ການຜິດປົກກະຕິ ຍົກເວັ້ນທີ່ໄດ້ກ່າວມາຂ້າງໃນ ແລະ ຍົກເວັ້ນ ການບົ່ງດູດ | 25,00% |
| ການແທກເຂົ້າໄປໃນບ່າໄຫລ່,ສອກ,ສະໂພກ,ຫົວເຂົ່າຍົກເວັ້ນການບົ່ງດູດ | 37,50% |
| ການແທກ,ການຜ່າຕັດເອົາຂໍ້ເຂົ້າທີ່ເດີມ(ແປງຂໍ້),ການຜ່າຕັດເຮັດໃຫ້ຂໍ້ແຂງ,ບ່າໄຫລ່,ກະໂພກ ຫລື ກະດູກສັນຫລັງ | 95,00% |
| ຫົວເຂົ່າ,ຂໍ້ສອກ,ຂໍ້ມື ຫລື ຂໍ້ຕີນ | 50,00% |
| ການຫລຸດໂບກຂອງນີ້ວມື ຫລື ນີ້ວຕີນແຕ່ລະນີ້ວ | 5,00% |
| ບ່າໄຫລ່,ສອກ,ຂໍ້ມື ຫລື ຂໍ້ຕີນ | 20,00% |
| ກະດູກຄາງກະໄຕ | 10,00% |

| | |
|---|---|
| ຂໍກະໂພກ | 70,00% |
| ຫົວເຂົ່າ( ຍົກເວັ້ນຫມາກບ້າຫົວເຂົ່າ) | 30,00% |
| ຫມາກບ້າຫົວເຂົ່າ | 15,00% |
| ສຳລັບການຫລຸດໂບກຊີ່ງຈຳເປັນຕ້ອງໄດ້ຮັບການຜ່າຕັດດ່ວນ ແມ່ນໃຫ້ເພີ່ມຂື້ນອີກທົບເທົ່າຂອງອັດຕາສິນທົດແທນ | 100,00% |

ທີ່ກຳນົດໄວ້ໃນລາຍການຂ້າງເທິງນີ້.

<u>ດັງ</u>

| | |
|---|---|
| ການຜ່າຕັດດັງ | 5,00% |
| ການຜ່າຕັດພົ້ງດັງ ໂດຍທາງນອກດັງ | 20,00% |
| ການຜ່າຕັດພົ້ງດັງ ໂດຍຜ່ານເຂົ້າໃນທາງດັງ | 40,00% |
| ການຜ່າຕັດເອົາຕິ່ງທາງໃນດັງອອກ,ນື່ງ ຫລື ຫລາຍອັນ | 30,00% |
| ການຜ່າຕັດກ້ອງເຫຍື່ອເມືອກ | 30,00% |
| TURBINECTOMY (ການຜ່າຕັດເອົາ Tubin ໃນດັງອອກ) | 15,00% |

<u>ການບົ່ງດູດ</u>

| | |
|---|---|
| ການບົ່ງດູດທ້ອງ | 12,50% |
| ພົ້ງເອີກ ຫລື ພົກຍ່ຽວ ຍົກເວັ້ນການແຍ່ສາຍສວນຍ່ຽວ | 7,50% |
| ເຈ້ຍຫູ,ຖົງທຳຊືມນ້ຳ,ຂໍ້ ຫລື ກະດູກສັນຫລັງ | 7,50% |

<u>ໃສ້ແກ່ທ່ອນສຸດ</u>

| | |
|---|---|
| ການຜ່າຕັດອອກຫມົດສຳລັບມະເຮັງທຸກໄລຍະ ລວມທັງການເອົາລຳໃສ້ອກມາເປັນຮູອາຈົມໃຫມ່ | 100,00% |
| ລິດສະດວງທະວານນອກ ການເອົາອອກຫມົດ | 15,00% |
| ລິດສະດວງທະວານໃນ ຫລື ນອກ ລວມທັງໃສ້ແກ່ທ່ອນສຸດຍ່ອນ, ເອົາອອກຫມົດ ຫລື ປິ່ນປົວດ້ວຍການສັກຢາຄົບຖ້ວນ | 40,00% |
| ຮູຊືມຢູ່ຮູທະວານ | 40,00% |
| ຮອຍແຫງຢູ່ຮູທະວານ | 15,00% |
| ການຜ່າຕັດລຳໃສ້ແກ່ທ່ອນສຸດອື່ນໆ | 30,00% |

<u>ກະໂຫລກຫົວ</u>

| | |
|---|---|
| ການຜ່າຕັດເຂົ້າກະໂຫລກຫົວ ການເຈາະກະໂຫລກຫົວ ຍົກເວັ້ນການບົ່ງດູດ | 100,00% |
| ການເອົາປ່ຽງກະໂຫລກຫົວ ທີ່ເຈາະອອກ ຫລື ເພື່ອແກ້ໄຂການຫນີບເຕັ່ງ | 50,00% |

<u>ຄໍ</u>

| | |
|---|---|
| ການຜ່າຕັດເອົາຕ່ອມອາມິດານອອກ ຫລື ບໍ່ເອົາທັງຕ່ອມກະດັນອອກ | 35,00% |
| ການໃຊ້ເຄື່ອງຊ່ອງເບິ່ງຄໍເພື່ອການບົ່ງມະຕິ | 20,00% |

<u>ກ້ອນເປົ້າ(ເນື້ອ-ງອກ)</u>

| | |
|---|---|
| ການຜ່າຕັດເນື້ອ-ງອກຊະນິດຮ້າຍແຮງ ຍົກເວັ້ນເນື້ອ-ງອກຊັ້ນເຍື່ອເມືອກ,ຜິວຫນັງ ແລະ ແຜຈຸລັງກ້ອງຫນັງ | 85,00% |
| ເນື້ອ-ງອກຊະນິດຮ້າຍຍແຮງຂອງຊັ້ນເຍື່ອເມືອກ,ຜິວຫນັງ ແລະ ແຜຈຸລັງກ້ອງຫນັງ | 45,00% |
| ການຜ່າຕັດເນື້ອງອກຊະນິດ POLONIDAL SINUS ຫລື ກ້ອນເປົ້າຖົງນ້ຳ ຊະນິດດັ່ງກ່າວ | 25,00% |
| ເນື້ອງອກຊະນິດບໍ່ຮ້າຍແຮງຂອງແກ່ນອັນທະ ຫລື ນົມ | 20,00% |
| ຕ່ອມກະດັນ (GANGLION) | 10,00% |
| ຂີ້ກະຕອດ ຫລື ໄຝ | 7,50% |
| ເນື້ອງອກຊະນິດບໍ່ຮ້າຍແຮງແຫ່ງດຽວ ຫລື ຫລາຍແຫ່ງ ເວັ້ນເສຍແຕ່ຈະລະບຸໄວ້ໄດ້ນອນໂຮງຫມໍ | 25,00% |
| ເນື້ອງອກຊະນິດບໍ່ຮ້າຍແຮງແຫ່ງດຽວ ຫລື ຫລາຍແຫ່ງທີ່ບໍ່ໄດ້ນອນໂຮງຫມໍ | 7,50% |

ໃນກໍລະນີທີ່ມີການປິ່ນປົວດ້ວຍແສງລັງສີ (x) ຫລື ທາດຣາດີອອມ (Radium) ສຳລັບ ບໍ່ວ່າເນື້ອງອກຊະນິດ ທີ່ໄດ້ກ່າວໄວໃນຂ້າງເທິງການທົດແທນສູງສຸດສາມາດຈ່າຍໃຫ້ສຳລັບການປິ່ນປົວຢ່າງເຕັມສ່ວນລວມທັງການຜ່າຕັດອື່ນໆ.

<u>ເສັ້ນເລືອດ</u>
ພະຍາດເສັ້ນເລືອດຂອດ:

| | |
|---|---|
| ການຜ່າຕັດເສັ້ນເລືອດທຸກຢ່າງ ຫລື ການສັກຢາໃນຂາຂ້າງດຽວ | 35,00% |
| ການຜ່າຕັດເສັ້ນເລືອດທຸກຢ່າງ ຫລື ການສັກຢາໃນຂາສອງຂ້າງ | 50,00% |

ຖ້າການຜ່າຕັດຢ່າງສົມບູນແບບທີ່ບໍ່ໄດ້ກ່າວໄວ້ໃນລາຍການຜ່າຕັດ ບໍລິສັດຈະກຳນົດທົດແທນສູງສຸດໃຫ້ສຳລັບການຜ່າຕັດນັ້ນໆ. ການຜ່າຕັດທີ່ມີລະດັບຂັ້ນ ແລະ ຄວາມຮ້າຍແຮງ
ເທົ່າທຽມກັນ ແມ່ນໃຫ້ນຳໄປໃຊ້ເປັນມາດຖານໃນການເຮັດສັນຍາຊຳລະສິນທົດແທນ.

## 15.ແຈ້ງການຂໍ້ມູນຄວາມເປັນສ່ວນຕົວ

ບໍລິສັດດຳເນີນການ ແລະ ປະມວນຂໍ້ມູນສ່ວນບຸກຄົນ ເພື່ອຈຸດປະສົງໃນການກະກຽມໃບສະເໜີລາຄາ,
ອອກສັນຍາປະກັນໄພ,ເກັບຄ່າທຳນຽມ,ຊຳລະການຮຽກຮ້ອງແລະສຳລັບຈຸດ
ປະສົງອື່ນໆທີ່ກ່ຽວຂ້ອງໂດຍກົງກັບການຈັດຕັ້ງເງື່ອນໄຂການປະກັນໄພ.
ຂໍ້ມູນຂອງຜູ້ໄດ້ຮັບການປະກັນໄພຖືເປັນຄວາມລັບສຸດຍອດຂອງບໍລິສັດ. ຜູ້ໄດ້ຮັບການປະກັນໄພສິດທີ່ຈະເຂົ້າ ເຖິງຂໍ້ມູນສ່ວນບຸກຄົນທີ່ກ່ຽວກັບພວກເຂົາ.
ຜູ້ໄດ້ຮັບການປະກັນໄພຍັງມີສິດທີ່ຮ້ອງຂໍ ໃຫ້ບໍລິສັດແກ້ໄຂ ຫລື ລົບຂໍ້ມູນໃດໜຶ່ງທີ່ ຜູ້ໄດ້ຮັບການປະກັນໄພເຊື່ອວ່າບໍ່ຖືກຕ້ອງ ຫລື ເກົ່າແລ້ວ. ບໍລິສັດຈະບໍ່ຮັກສາ
ຂໍ້ມູນຂອງຜູ້ໄດ້ຮັບປະກັນໄພໄວ້ດົນເກີນຄວາມຈຳເປັນ ນອກເໜືອຈາກຈຸດປະສົງທີ່ມີ.

ພວກເຮົາອາດຈະເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານ ໃຫ້ກັບພາກສ່ວນອື່ນທີ່ການດຳເນີນທຸລະກິດຮ່ວມກັບພວກເຮົາ ຕາມຈຸດປະສົງທີ່ລະບຸໄວ້ໃນວັກເທິງນີ້ ຫລື ເພື່ອ
ໃຫ້ພວກເຂົາສາມາດມອບຜະລິດຕະພັນ ແລະ ການບໍລິການຂອງພວກເຂົາ ໃຫ້ແກ່ທ່ານ. ພາກສ່ວນເຫຼົ່ານີ້ອາດປະກອບມີ ຜູ້ປະກັນໄພ,ຜູ້ສື່ກາງ,ຜູ້ປະກັນໄພຕໍ່,ສະມາຄົມ
ປະກັນໄພ, ບໍລິສັດທີ່ກ່ຽວຂ້ອງ, ທີ່ປຶກສາຂອງພວກເຂົາ,ບຸກຄົນທີ່ມີສ່ວນກ່ຽວຂ້ອງໃນການຮຽກຮ້ອງ, ຜູ້ເກັບກຳຂໍ້ມູນການຮຽກຮ້ອງພາຍ ນອກ ແລະ
ຜູ້ກວດສອບ,ພາກສ່ວນຕ່າງໆ
ທີ່ພວກເຮົາມີແຜນປະກັນໃນບ່ອນທີ່ທ່ານໄດ້ຊື້ປະກັນໄພ (ເຊັ່ນ: ຜູ້ໃຫ້ຢືມເງິນ ຫລື ຜູ້ຜະລິດຍົນ ແລະ/ຫລື ຕົວແທນຈຳໜ່າຍ).
ຍັງອາດຈະມີການເປີດເຜີຍຂໍ້ມູນຕໍ່ລັດຖະບານ,ການບັງຄັບໃຊ້ກົດຫມາຍ,ການແກ້ໄຂຂໍ້ຂັດແຍ່ງ, ອົງການດ້ານກົດໝາຍ ຫລື ອົງການປົກຄອງ ຫລື ຕາມກົດຫມາຍກຳນົດ

ພວກເຮົາອາດຈະບັນທຶກສາຍໂທເຂົ້າ ແລະ/ຫລື ໂທອອກ ເພື່ອຈຸດປະສົງໃນການຝຶກອົບຮົມ ຫລື ການກວດສອບ. ໃນກໍລະນີ ທີ່ພວກເຮົາໄດ້ບັນທຶກການໂທ,
ພວກເຮົາສາມາດສະໜອງສຳເນົາໃຫ້ທ່ານຕາມຕາມຄຳຮ້ອງຂໍຂອງທ່ານໄດ້ເມື່ອເໝາະສົມ.

ໂດຍການສະໜອງຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ແກ່ພວກເຮົາ, ທ່ານ ແລະ ບຸກຄົນອື່ນທີ່ທ່ານສະໜອງຂໍ້ມູນສ່ວນຕົວ ດ້ວຍຄວາມສະໝັກໃຈໃຫ້ນຳໃຊ້ ແລະ ເປີດເຜີຍຂໍ້ມູນ
ເຫຼົ່ານີ້ ຈົນກວ່າທ່ານຈະກ່າວໄວ້ເປັນຢ່າງອື່ນ. ຖ້າທ່ານຕ້ອງການ ຍົກເລີກຄວາມສະໝັກໃຈຂອງທ່ານ,
ລວມທັງສິ່ງຕ່າງໆເຊັ່ນຂໍ້ມູນທີ່ໄດ້ຮັບກ່ຽວກັບຜະລິດຕະພັນ ແລະ ສິ່ງທີ່ພວກເຮົາ ຫລື ບຸກຄົນທີ່ມີການພົວພັນກັບພວກເຮົາມອບໃຫ້, ກະລຸນາຕິດຕໍ່ຫາພວກເຮົາ.

## 16.ອື່ນໆ

ລາຍລະອຽດຂອງການຄຸ້ມກັນທີ່ເປັນທາງເລືອກອື່ນໆທີ່ຮ້ອງຂໍ ແລະ ເຫັນດີຕົກລົງໂດຍ ຜູ້ສະໝັກທີ່ບໍ່ໄດ້ລະບຸໄວ້ໃນນະ ໂຍບາຍແມ່ບົດປັດຈຸບັນ
ຈະຖືກຄັດຕິດເປັນເງື່ອນໄຂເພີ່ມເຕີມສຳລັບການຈັດຕັ້ງປະຕິບັດ. ຜູ້ສະໝັກຕ້ອງອ່ານຢ່າງລະອຽດ ແລະ ໃຫ້ເຂົ້າໃຈກ່ອນລົງນາມ ແລະ ຈ່າຍຄ່າທຳນຽມ.

## ຕາຕະລາງທີ 1: ການອະນຸຍາດ ໃຫ້ສື່ສານຜ່ານຊ່ອງທາງດິຈິຕອນ ແລະ ໃຫ້ສື່ສານຂໍ້ມູນການຕະຫຼາດ

## DIGITAL COMMUNICATION CONSENT

BY agreeing to purchase this insurance, you agree to receive via SMS and/or via e-mail by the mobile number and/or e-mail address provided herein above, respectively on contract renewal notice, premium and/or claim payment status and any information of your interest on this insurance. Please visit https://www.azlaos.com to view Assurances General Laos Data Privacy Notice.

## ການອະນຸຍາດໃຫ້ສື່ສານຜ່ານຊ່ອງທາງດິຈິຕອນ

ໂດຍການຕົງລົງຊື້ສັນຍາປະກັນໄພນີ້, ທ່ານໄດ້ຕົກລົງທີ່ຈະໄດ້ຮັບຂໍ້ມູນກ່ຽວກັບການແຈ້ງຕໍ່ສັນຍາ, ການແຈ້ງສະຖານະການຊໍາລະຄ່າທໍານຽມປະກັນໄພ ແລະ/ຫຼື ການຈ່າຍສິນທົດແທນປະກັນໄພ ແລະ ຂໍ້ມູນອື່ນໆທີ່ເປັນປະໂຫຍດສໍາລັບທ່ານກ່ຽວກັບການປະກັນໄພ ຜ່ານທາງຂໍ້ຄວາມສັ້ນ (SMS) ຫາເບີມືຖື ແລະ/ຫຼື ອີເມວ ຕາມທີ່ທ່ານສະໜອງໃຫ້ໃນໃບສະເໜີເອົາປະກັນໄພນີ້. ທ່ານສາມາດເຂົ້າເບິ່ງລາຍລະອຽດແຈ້ງການກ່ຽວກັບຂໍ້ມູນຄວາມເປັນສ່ວນຕົວໄດ້ທີ່ https://www.azlaos.com

## MARKETING CONSENT

BY purchasing this insurance, you give consent to Assurances General Laos to use your personal information for the marketing purpose of the company e.g. communication on product/service, promotional activities, carrying out lucky draws, marketing surveys, and other information which you may be interested in. in the event you would like to withdraw your marketing consent, please send SMS consent "123" to +856 20 56689805 or opt-out via My Insurance Web and My Insurance App.

## ການອະນຸຍາດໃຫ້ສື່ສານຂໍ້ມູນການຕະຫຼາດ

ໂດຍການຕົກລົງຊື້ປະກັນໄພນີ້, ທ່ານອະນຸຍາດໃຫ້ ບໍລິສັດ ປະກັນໄພລາວ, ນໍາໃຊ້ຂໍ້ມູນສ່ວນຕົວຂອງທ່ານເພື່ອຈຸດປະສົງໃນການຕິດຕໍ່ ແລະ ສົ່ງຂໍ້ມູນທາງການຕະຫຼາດຂອງບໍລິສັດ ເຊັ່ນ: ການບໍລິການ ແລະ ຜະລິດຕະພັນປະກັນໄພ, ກິດຈະກໍາສົ່ງເສີມການຂາຍ, ການຈັບສະຫຼາກຊິງໂຊກ, ການສໍາຫຼວດຕະຫຼາດ, ແລະ ຂໍ້ມູນອື່ນໆທີ່ທ່ານອາດຈະມີຄວາມສົນໃຈ. ຖ້າທ່ານບໍ່ອະນຸຍາດໃຫ້ໃຊ້ຂໍ້ມູນສ່ວນຕົວເພື່ອຈຸດປະສົງດັ່ງກ່າວ ທ່ານສາມາດແຈ້ງປະຕິເສດຮັບຂໍ້ມູນ ໂດຍການສົ່ງຂໍ້ຄວາມສັ້ນ (SMS) ພິມຄໍາວ່າ " 123 " ສົ່ງໄປທີ່ເບີ +856 20 56689805 ຫຼື ແຈ້ງຜ່ານທາງ My Insurance Web ແລະ My Insurance App.